ບົດຮຽນໂຮງຮຽນວັນອາທິດ
ວັນອາທິດ ທີ 6 ເມສາ 2008 (04-6-2008)

ຄົ້ນຫາທິດທາງໃໝ່

ຂໍ້ພຣະຄັນຄີໃນບົດຮຽນ: ປະຖົມມະການ 12:1-8; 13:5-9; 14-16

ຄຳຖາມຊີວິດ: ຂ້າພະເຈົ້າຈະຕອບສນອງພຣະເຈົ້າຢ່າງໃດໃນເມື່ອພຣະອົງໄດ້ນຳພາໃຫ້ປ່ຽນທິດທາງທີ່ບໍ່ໄດ້ຄິດໄວ້ໃນຊີວິດມາກ່ອນ?

ພຣະຄັນຄີແຫ່ງຄວາມຈິງ: ສິ່ງທີ່ພຣະເຈົ້າສັນຍາ ແລະການເອີ້ນຂອງພຣະອົງຫລາຍໆເທື່ອກໍບໍ່ເຫັນແຈ່ມແຈ້ງດີບາດດຽວ ຫລືບໍ່ໃຫ້ມີຄວາມຂັດແຍ້ງອັນໃດ.

ຜົນສະທ້ອນຕໍ່ຊີວິດ: ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຈະຊ່ວຍທ່ານໃຫ້ຄົ້ນຫາທິດທາງໃໝ່ໃນຄວາມເຊື່ອດ້ວຍສິ່ງຕໍ່ໄປນີ້:

- ບອກເຖິງການທ້າທາຍເຖິງຄວາມເຊື່ອທີ່ອັບຣາຮາມ ມີ;
- ໃຫ້ຫວນຄິດເຖິງຄວາມຍິນດີທີ່ທ່ານເອງໄດ້ຍົກຍ້າຍໄປຕາມທິດທາງທີ່ພຣະເຈົ້ານຳພາ.

ນາງຊິນເດັ້ຣມີນິສັຍບໍ່ຄ່ອຍຢາກປະເຊີນກັບການຍົກຍ້າຍ ລາວໄດ້ເຂົ້າຮ່ວມໂຮງຮຽນວັນອາທິດກັບຜູ້ເປັນສາມີເປັນເວລາສິບກว่าປີ. ໃນປີທີ່ແລ້ວນີ້ລາວໄດ້ຮັບເອົາການຮຽກເອີ້ນຈາກພຣະເຈົ້າໃຫ້ຍ້າຍຈາກຫ້ອງຮຽນໂຮງຮຽນວັນອາທິດ ໃຫ້ເປັນຄຣູສອນເດັກນ້ອຍ. ລາວໄດ້ຄິດໃນໃຈວ່າ, *"ຂ້າພະເຈົ້າບໍ່ຮູ້ວ່າຈະມີພຣະພອນໃນການສອນຫລືບໍ່"* ລາວມີຄວາມຢ້ານ, ຮູ້ສຶກວ່າຕົນເອງຂາດຄວາມສາມາດ, ແລະລາວມີຄວາມກະວົນກະວາຍຕໍ່ຄຳເອີ້ນຈາກພຣະເຈົ້າ. ຍ້ອນການໃຫ້ກຳລັງໃຈຈາກຜູ້ເປັນສາມີ ແລະຈາກນັກສຶກສາໂຮງຮຽນພຣະຄັນຄີ ລາວເລີຍຕັດສິນໃຈກາຍເປັນຄຣູສອນແລະໃນທີ່ສຸດລາວມັກໜ້າທີ່ໃໝ່ແລະຮູ້ສຶກວ່າບໍ່ຢາກເຮັດແນວອື່ນອີກນອກຈາກເປັນຄຣູສອນ.

ການຮຽກເອີ້ນຂອງພຣະເຈົ້ານັ້ນຕ້ອງປະກອບດ້ວຍການປ່ຽນແປງສເມີ. ທ່ານອາດຈະເປັນຄົນຂາດພຣະພອນຖ້າທ່ານປະຕິເສດການປ່ຽນແປງ? ທ່ານອາດຈະບໍ່ໄດ້ອວຍພອນແກ່ຄົນອື່ນໃນເມື່ອທ່ານບໍ່ຍອມຕິດຕາມຄຳຮຽກເອີ້ນຂອງພຣະເຈົ້າ?

ສຶກສາພຣະຄັນຄີ

1. ເອີ້ນໃຫ້ມີການປ່ຽນແປງ (ປະຖົມກະການ 12:1-3)

ເທຣາ ຜູ້ເປັນພໍ່ຂອງອັບຣາມ(**ຕໍ່ມາຊື່ອັບຣາຮາມ**) ໄດ້ອາສັຍຢູ່ໃນເມືອງ ເອີ ຊຶ່ງເປັນພາກສ່ວນຂອງພວກຊາດີແອນ, ເມືອງເມເຊໂປຕາເມັຣ ເມືອງນີ້ເປັນບ່ອນສຳຄັນສຳລັບການເມືອງແລະວັດທະນະທັນຫລາຍ. ເທຣາຫວັງວ່າຈະພາຄອບຄົວຍົກຍ້າຍໄປຢູ່ດິນແດນອານາອານ, ແຕ່ພວກເຂົາພາກັນຢຸດຢູ່ໃນເມືອງຮາຣາ ໃນທີ່ສຸດ ເທຣາກໍໄດ້ເສັຣຊີວິດໃນບ່ອນນັ້ນ. ຢ່າງໃດກໍຕາມພຣະເຈົ້າບໍ່ໄດ້ຍົກເລີກການຮຽກເອີ້ນຂອງພຣະອົງຕໍ່ຄອບຄົວ ອັບຣາມ. ຫລັງຈາກຜູ້ເປັນພໍ່ເທຣາໄດ້ຕາຍແລ້ວ ພຣະເຈົ້າໄດ້**ກ່າວ**ຕໍ່ **ອັບຣາມ** ແລະຮຽກເອີ້ນລາວໃຫ້ອອກຈາກເມືອງ ຮາຣາ.

ໃນເມື່ອພຣະເຈົ້າໄດ້ເອີ້ນອັບຣາມໃຫ້ພາຄອບຄົວອອກໄປ. ພຣະເຈົ້າໄດ້ສັ່ງຄຳດຽວ ແຕ່ພຣະເຈົ້າໄດ້ສັນຍາຈະໃຫ້ຫລາຍໆຢ່າງ. ຄຳສັ່ງຄືໃຫ້ເອົາຄອບຄົວໄປ**ດິນແດນ**ທີ່ພຣະເຈົ້າຈະ**ສຳແດງຕໍ່ລາວ**. ການທີ່ພຣະເຈົ້າໄດ້ເອີ້ນໃຫ້ຍົກ

ຍ້ານ ກໍເຮັດໃຫ້ຊີວິດຂອງອັບຣາມໄດ້ມີການປ່ຽນແປງເໝືອນກັນ. ທຸກສິ່ງທີ່ລາວຮູ້ ແລະລ້ຽງເຄີຍກໍປະໄວ້ທາງຫລັງ ໃນເມືອງເອີ ແລະ ຮາຣາ. ການທີ່ຈະຕິດຕາມພຣະເຈົ້າ ອັບຣາມກໍຕ້ອງມີຄວາມຍິນດີຕາມພຣະອົງໄປດ້ວຍຄວາມເຊື່ອ ແລະພໍໃຈທີ່ຮັບເອົາການປ່ຽນແປງໃນຊີວິດ.

ພຣະເຈົ້າສັນຍາວ່າຖ້າອັບຣາມຍິນດີເຮັດຕາມຄຳສັ່ງຂອງພຣະອົງ ພຣະອົງຈະເຮັດໃຫ້ລາວມີເຊື້ອຍສາຍຫລາຍ**ກາຍເປັນປະເທດໃຫຍ່**. ພຣະອົງຈະອວຍພຣະພອນ ແລະເຮັດໃຫ້ລາວມີຊື່ສຽງ. ພຣະເຈົ້າຍັງສັນຍາວ່າຈະສະຖິດຢູ່ນຳ ຮັກສາໃຫ້ມີຄວາມປອດພັຍເວລາເດີນທາງແລະອວຍພອນຜູ້ທີ່ອວຍພອນລາວ ແລະລ້ຽງໂທດຜູ້ປ້ອຍດ່າລາວ. ຈາກຄອບຄົວນ້ອຍໆຂອງ ອັບຣາມ ພຣະເຈົ້າສັນຍາວ່າຈະ**ອວຍພຣະພອນແກ່ຄົນທັງໂລກ.**

ອັບຣາມເຊື່ອຟັງ ແລະໄດ້ເຮັດຕາມຄຳສັ່ງຂອງອົງພຣະຜູ້ເປັນເຈົ້າບໍ່? ລາວຈຳເປັນຕ້ອງສັ່ງຊາຄຳສັ່ງຂອງພຣະເຈົ້າຕໍ່ຄວາມສະບາຍຂອງລາວບໍ່?. ອັບຣາມໄດ້ຕັດສິນໃຈວ່າ ການທີ່ຈະຕິດຕາມນ້ຳພຣະທັຍຂອງພຣະເຈົ້ານັ້ນສຳຄັນຫລາຍໃນຊີວິດຂອງລາວ ແທນທີ່ຈະຢູ່ໃນບ່ອນທີ່ສະບາຍແລະບ່ອນທີ່ລ້ຽງເຄີຍ.

ພວກເຮົາໃນທຸກວັນນີ້ກໍໄດ້ພົບກັບການທ້າທາຍຢ່າງນີ້ໃນຊີວິດ. ພຣະເຈົ້າໄດ້ເອີ້ນໃຫ້ພວກເຮົາອອກຈາກບ່ອນສະບາຍ ແລະກາຍເປັນຜູ້ຮັບໃຊ້ເປັນພະຍານເພື່ອພຣະອົງ. ພຣະເຈົ້າສັນຍາວ່າຈະສະຖິດຢູ່ນຳພວກເຮົາເວລາເຮົາອອກໄປຮັບໃຊ້ໃນບ່ອນຕ່າງໆ, ແຕ່ພວກເຮົາໄດ້ທຽບຄຳສັ່ງຂອງພຣະອົງໃສ່ຄວາມຢ້ານກົວຂອງພວກເຮົາ ແລະບໍ່ຢາກຮັບເອົາການປ່ຽນແປງເຂົ້າມາໃນຊີວິດ.

ຂ. <u>ການເຫັນແຈ້ງມາຈາກການເຊື່ອຟັງ</u> (ປະຖົມມະການ 12: 4-8)

ຫລາຍເທື່ອພວກເຮົາຕ້ອງອອກຈາກບ່ອນສະບາຍໂດຍທີ່ບໍ່ຮູ້ຈັກວ່າອະນາຄົດຈະເປັນຢ່າງໃດ. ອັບຣາມອອກຈາກຮາຣານໂດຍທີ່ບໍ່ຮູ້ວ່າຄົນໃນເມືອງການາອານບ່ອນລາວຈະໄປຢູ່ນັ້ນຈະຕ້ອນຮັບລາວຫລືບໍ່. ໃນເມື່ອອັບຣາມໄດ້ເດີນອອກໄປດ້ວຍຄວາມເຊື່ອຟັງພຣະເຈົ້າ ລາວກໍເລີ້ມເຂົ້າໃຈຂຶ້ນວ່າພຣະເຈົ້າຈະຊ່ວຍລາວຢ່າງໃດ.

ການເດີນທາງອອກໄປເລີ້ມຈາກຜູ້ເປັນບິດາ, ອັບຣາມ ນາງ**ຊາຣາ**ຜູ້ເປັນພັນລະຍາ ແລະ**ໂລດ**ຜູ້ເປັນຫລານຊາຍພາກັນໄປຍັງແຜ່ນດິນການາອານ. ອັບຣາມກໍເອົາສິ່ງຂອງທີ່ຕົນມີພ້ອມດ້ວຍຄົນໃຊ້ຜ່ານເມືອງ**ຊີເຄມ**, ໃນເວລາຕໍ່ມາເມືອງນີ້ກໍກາຍເປັນບ່ອນສຳຄັນ. ໃນເມື່ອອັບຣາມຢູ່ບ່ອນນັ້ນ ລາວໄດ້ປະສົບກັບອົງພຣະຜູ້ເປັນເຈົ້າ ຊຶ່ງເປັນບ່ອນໝາຍເຖິງການເຊື່ອຟັງຕໍ່ອົງພຣະຜູ້ເປັນເຈົ້າ. ພຣະເຈົ້າໄດ້ສັນຍາຕໍ່ອັບຣາມວ່າພຣະອົງຈະປະທານແຜ່ນດິນນີ້ໃຫ້ແກ່ເຊື້ອສາຍຂອງລາວ. ຂໍ້ສັນຍານີ້ເປັນສິ່ງປລາດເພາະອັບຣາມບໍ່ໄດ້ມີລູກຈັກຄົນທີ່ຈະສືບເຊື້ອສາຍ. ອັບຣາມໄດ້ຕອບສນອງຕໍ່ຄຳສັນຍາຂອງພຣະເຈົ້າດ້ວຍການສ້າງແທ່ນບູຊາຂຶ້ນໃນເມືອງນັ້ນເພື່ອນະມັສການ. ການເຂົ້າໃຈແຈ້ງເຫັນດີນັ້ນບໍ່ໄດ້ເກີດຂຶ້ນເທື່ອ ຈົນກວ່າອັບຣາມໄດ້ເຊື່ອຟັງພຣະເຈົ້າກ່ອນ.

ຫລັງຈາກອອກເມືອງຊີເຄມ ອັບຣາມໄດ້ຍ້ານໄປຍັງ**ພູເຂົາທາງທິດຕາເວັນອອກຂອງເມືອງເບັດເອນ,** ຊຶ່ງເປັນໃຈກາງຂອງແຜ່ນດິນການາອານ. ອັບຣາມໄດ້ເດີນທາງຕໍ່ໄປ ແລະໄດ້ປະສົບກັບພຣະພັກຂອງພຣະເຈົ້າສະຖິດຢູ່ນຳຕລອດໃນການຕິດຕາມພຣະອົງໄປດ້ວຍການເຊື່ອຟັງ ແລະເພີ່ນກໍ**ໄດ້ສ້າງແທນບູຊາຂຶ້ນຖວາຍແກ່ພຣະເຈົ້າແລະເພື່ອນະມັສການ.** ອັບຣາມໄດ້ເດີນທາງໄປຍັງບ້ານເມືອງບ່ອນຈະຢູ່ໃນອະນາຄົດ ຜ່ານເມືອງເນເກັບຊຶ່ງເປັນທະເລຊາຍທິດໃຕ້ຂອງກຸງເຢຣູຊາເລັມ

ການເລີ້ມບາດກ້າວໃນການເຊື່ອຟັງພຣະເຈົ້ານັ້ນ ຫລາຍໆເທື່ອກໍໄດ້ພົບເຫັນຄວາມເຂົ້າໃຈແຈ້ງຂຶ້ນໃນແຜນການຂອງພຣະອົງ. ອັບຣາມບໍ່ໄດ້ເຂົ້າໃຈໃນແຜນການຂອງພຣະເຈົ້າຈົນເຖິງເວລາລາວໄດ້ເດີນທາງອອກໄປຍັງປະເທດການາອານ. ແຕ່ ເຖິງປານນັ້ນລາວກໍຍັງບໍ່ໄດ້ເຂົ້າໃຈແຈ້ງດີ ລາວຮູ້ແຕ່ວ່າພຣະເຈົ້າປະທານໃຫ້ມີ**ເຊື້ອສາຍ.** ອັບຣາມໄດ້ເຊື່ອຟັງພຣະປະສົງຂອງພຣະເຈົ້າ ແລະລາວກໍໄດ້ນະມັສການພຣະອົງໂດຍຕລອດກ່ອນພຣະເຈົ້າໄດ້ໃຫ້ຄຳສັນຍາຂອງພຣະອົງຕໍ່ຄວາມເປັນຈິງໃນຊີວິດຂອງລາວແລະຄອບຄົວ.

ພວກນັກຂຽນຊາວຍິວໄດ້ບັນທຶກໄວ້ດັ່ງນີ້, *"ເພາະອັບຣາຮາມມີຄວາມເຊື່ອນີ້ ເມື່ອພຣະເຈົ້າຊົງເອີ້ນໃຫ້ເພີ່ນອອກເດີນທາງໄປຍັງບ່ອນທີ່ເພີ່ນຈະໄດ້ຮັບເປັນມໍຣະດົກ ເພີ່ນໄດ້ເຊື່ອຟັງແລະໄດ້ເດີນທາງອອກໄປໂດຍບໍ່ຮູ້ເລີຍວ່າຕົນເອງຈະ*

ໄປ ໃສ. "(ເຮັບເຣີ. 11:8). ເຊັ່ນດຽວກັນ ພວກເຮົາຕ້ອງເຊື່ອຟັງພຣະເຈົ້າໃນເມື່ອພຣະອົງໄດ້ເອີ້ນເອົາພວກເຮົາໃຫ້ອອກໄປ, ໃຫ້ຮູ້ວ່າພຣະເຈົ້າຮັກສາຄຳໝັ້ນສັນຍາຂອງພຣະອົງສເມີ.

3. <u>ບັນຫາຂັດແຍ່ງເກີດຂຶ້ນ</u> (ປະຖົມມະການ 13: 5-7)

ອັບຣາມໄດ້ປະສົບກັບການອິດທິ ຈຶ່ງເປັນເຫດໃຫ້ລາວໄດ້ໄປຍັງປະເທດເອຢິບ (ປະຖົມມະການ 12:9-13:4). ໃນທີ່ນັ້ນ ລາວໄດ້ບອກໃຫ້ຜູ້ເປັນເມັຽບອກຄົນອື່ນໆว່ານາງເປັນນ້ອງສາວ ເພື່ອຈະເອົາຕົວລອດແລະຈະບໍ່ຖືກຂ້າ ນາງຊາຣາຍຄົນງາມຈະບໍ່ຕົກເປັນເມັຽຂອງຄົນອື່ນ. ເຫດນີ້ ພຣະເຈົ້າໄດ້ເຮັດໃຫ້ກະສັດຟາໂຣແລະຄົວເຮືອນການາຍເປັນພະຍາດ ແລະໃນທີ່ສຸດອັບຣາມກໍໄດ້ກັບໄປຍັງແຜ່ນດິນທີ່ພຣະເຈົ້າໄດ້ສັນຍາໃຫ້. ລາວໄດ້ກັບໄປເປັນຄົນຮັ່ງມີເພາະພຣະເຈົ້າໄດ້ອວຍພຣະພອນແກ່ລາວ.

ການທີ່ກ້າວໄປກັບພຣະເຈົ້າບໍ່ໄດ້ໝາຍຄວາມວ່າຄົນນັ້ນຈະບໍ່ໄດ້ພົບກັບບັນຫາ. ໃນເມື່ອພຣະເຈົ້າໄດ້ອວຍພຣະພອນແກ່ອັບຣາມບັນຫາກໍເລີ່ມມີນາ. ໂລດ ຜູ້ເປັນຫລານຊາຍກໍໄດ້ຮັບພຣະພອນເໝືອກັນ, ຝູງສັດຕ່າງໆ (ສິ່ງຂອງ) ກໍມີຢ່າງມາກມາຍ. ແຕ່ຢ່າງໃດກໍຕາມຍ້ອນຄວາມຮັ່ງມີຂອງພວກເຂົາທັງສອງ ແຜ່ນດິນທີ່ເຂົາຢູ່ຮ່ວມກັນນັ້ນກໍບໍ່ພໍທີ່ຈະລ້ຽງສັດທີ່ເຂົາມີຢ່າງມາກມາຍນັ້ນ. ດັ່ງນັ້ນ, ຈຶ່ງເກີດມີການ**ຜິດຖຽງກັນ**ລະຫວ່າ**ງຄົນໃຊ້ຂອງອັບຣາມແລະໂລດ.** ພວກເຂົາເຮັດໃຫ້ຄວາມຮັ່ງມີນັ້ນແຍກຈາກການເປັນຄອບຄົວ, ແຕ່ອັບຣາມແລະໂລດໄດ້ຕົກລົງກັນຢ່າງສັນຕິວິທີ (ປະຖົມມະການ 13:8-9).

ພວກເຮົາຢ່າເຂົ້າໃຈຜິດว่າການທີ່ເຮົາເດີນໄປກັບພຣະເຈົ້ານັ້ນຈະບໍ່ມີບັນຫາອັນໃດ. ບາງເທື່ອພວກເຮົາເຮັດຕາມພຣະປະສົງຂອງພຣະເຈົ້າ ໂອກາດທີ່ຈະມີບັນຫານັ້ນຍິ່ງເກີດມີ. ນັ້ນເປັນການທ້າທາຍທົດສອບຄວາມເຊື່ອຂອງເຮົາຕໍ່ອົງພຣະຜູ້ເປັນເຈົ້າ. ພວກເຮົາໝັ້ນໃຈว่าพระเจ้าจะช่วยให้พวกเราสัดซื่อต่อพระอง ในเวลามีบันหาหนัก. พวกเราคอนเชื่อหมั่นต่อพระเจ้าว่า พระองจะเรัดให้คำสัญยาของพระองกายเป็นจิง ถึงแม่นว่าจะมีบันหา.

4. <u>ໃຫ້ເພິ່ງຕໍ່ຄຳສັນຍາຂອງພຣະເຈົ້າ</u>. (ປະຖົມມະການ 13:8-9, 14-16).

ວິທີຮູ້ຈັກທິດທາງຂອງພຣະເຈົ້າ
ທ່ານສາມາດເບິ່ງເຫັນທິດທາງຂອງພຣະເຈົ້າໃນຊີວິດຂອງທ່ານບໍ່? ພຣະເຈົ້າໄດ້ເອີ້ນໃຫ້ອັບຣາມອອກຈາກດິນແດນ, ຍາດພີ່ນ້ອງ, ແລະບ້ານຂອງພໍ່ແມ່. ພຣະຄັນພີໄດ້ໃຊ້ປໂຍກທີ່ว่า, "ພຣະເຈົ້າໄດ້ຕັດກ່າວ ຫລືພຣະເຈົ້າໄດ້ປາກົດຕົວຕໍ່ອັບຣາມ." ຊຶ່ງໄດ້ບອກເຖິງການທີ່ພຣະເຈົ້າໄດ້ເອີ້ນເອົາ ແລະພຣະອົງນຳພາອັບຣາມ. ທ່ານອາດໄດ້ຮູ້ຈັກທິດທາງຂອງພຣະເຈົ້າໃນເມື່ອທ່ານອ່ານພຣະຄັນພີ, ອ້ອນວອນ, ຫລີ່ຍ່າງໄປກັບເພື່ອນໃນບ່ອນຕ່າງໆ. ບາງຄົນໄດ້ເຫັນການຮຽກເອີ້ນຂອງພຣະເຈົ້າໃນເວລາມີບັນຫາໃນຊີວິດ. ສ່ວນຂ້າພະເຈົ້າໄດ້ຮູ້ສຶກว่าพระเจ้าได้เอี้ยเอົາເວລານະມັສການຕອນແລງເວລາມີການສິດສອນໃຫ້ເປັນສາວົກ. ບາງຄົນໄດ້ຍິນຄຳເອີ້ນຂອງພຣະເຈົ້າເວລາຮັບໃຊ້ຄົນອື່ນໆ.

ອັບຣາມໄດ້ແກ້ບັນຫາຣະຫວ່າງຄົນໃຊ້ຂອງຫລານຊາຍ ແລະຄົນໃຊ້ຂອງຕົນເອງໄດ້ເປັນຢ່າງດີ. ລາວບໍ່ໄດ້ ໃຫ້ບັນຫາເປັນສິ່ງກີດກັ້ນຄວາມສັມພັນຂອງພວກເຂົາ. ດັ່ງນັ້ນ, ອັບຣາມຈຶ່ງຍອມໃຫ້ຫລານຊາຍເລືອກເອົາດິນດີ ແລະຍົກຍ້າຍຝູງສັດແລະຄົນໃຊ້ຂອງຕົນໄປທີ່ນັ້ນ. ການແຍກຈາກກັນນັ້ນດີກວ່າຢູ່ນຳກັນແລ້ວມີແຕ່ຜິດຖຽງກັນ. ເຫດຜົນທີ່ອັບຣາມຍອມນັ້ນເພາະລາວໄດ້ເຊື່ອຄຳສັນຍາຂອງພຣະເຈົ້າว่า ພຣະອົງຈະປະທານແຜ່ນດິນທັງໝົດໃຫ້ແກ່ເຊື້ອສາຍຂອງລາວ. ອັບຣາມຈຶ່ງເວົ້າว่า, "**ບໍ່ເຫັນບໍ ດິນທັງໝົດຢູ່ຕໍ່ໜ້າເຈົ້າ?**" ເຖິງແມ່ນທ່ານໂລດເລືອກເອົາດິນ ຕອນໃດກໍ

ຕາມ ອັບຣາມເຊື່ອວ່າພຣະເຈົ້າສັນຍາຈະມອບໃຫ້ແກ່ຕົນ. ການທີ່ລາວໄດ້ເຊື່ອໃນພຣະເຈົ້າເປັນເຫດໃຫ້ລາວແກ້ໄຂບັນຫາໄດ້ເປັນຢ່າງດີໂດຍທີ່ບໍ່ຜິດຖຽງກັນຈົນເຖິງຂັ້ນກຽດຊັງກັນເກີດຂຶ້ນ.

ພຣະເຈົ້າໄດ້ໃຫ້ລາງວັນຕໍ່ອັບຣາມເພາະລາວໄດ້ແກ້ບັນຫານັ້ນດ້ວຍຄວາມເຊື່ອໃນພຣະອົງ. ພຣະເຈົ້າຈຶ່ງບອກໃຫ້ອັບຣາມເບິ່ງໄປ**ທາງເຫນືອ, ທາງໃຕ້, ທາງຕາເວັນອອກແລະຕາເວັນຕົກ.** ພຣະເຈົ້າໄດ້ກ່າວວ່າສິ່ງທີ່ລາວເຫັນນັ້ນໄດ້ມອບໃຫ້ເປັນມໍຣະດົກແກ່ເຊື້ອສາຍຂອງລາວ. ພຣະເຈົ້າຍັງສັນຍາວ່າຈະອວຍພຣະພອນໃຫ້ລາວມີເຊື້ອສາຍຫລາຍ**ເໝືອນເມັດດິນຊາຍໃນທະເລ.** ແຕ່ອັບຣາມຕ້ອງອົດທົນລໍຄອຍຢ່າງມີຄວາມເຊື່ອແທ້ ເພາະເປັນເວລາຫລາຍປີແລ້ວ ລາວກໍຍັງບໍ່ມີລູກ

ພວກເຮົາກໍເໝືອນກັນ ຕ້ອງຍຶດຫມັ້ນໃນຄຳສັນຍາຂອງພຣະເຈົ້າໃນຊີວິດ-ໃນເມື່ອເຮົາປະສົບກັບບັນຫາມາງາ ປະການ. ບາງຄັ້ງກໍໄດ້ເຫັນຄຳສັນຍາຂອງພຣະອົງ ແຕ່ບາງຄັ້ງກໍຕ້ອງອົດທົນກ່ອນຈະໄດ້ພົບເຫັນຄຳຕອບຈາກພຣະເຈົ້າ. ໜ້າທີ່ຂອງພວກເຮົາຄືບໍ່ໃຫ້ເປັນຫ່ວງເຖິງເວລາທີ່ໄດ້ຮັບຄຳຕອບ ແຕ່ຈຶ່ງເອົາໃຈໃສ່ໃນການໄວ້ວາງใจໃນພຣະອົງກໍດີກວ່າ.

ບົດຮຽນໃນຊີວິດ

ພຣະເຈົ້າບໍ່ໄດ້ເອີ້ນເອົາພວກເຮົາເຂົ້າໄປໃນທາງສະດວກສະບາຍຕລອດໄປ. ບາງເທື່ອພຣະອົງໄດ້ເອີ້ນເອົາພວກເຮົາໄປໃນທາງລຳບາກເພື່ອໃຫ້ພວກເຮົາເພິ່ງພາອາສັຍພຣະອົງ. ຖ້າພວກເຮົາຢາກປະສົບກັບພຣະພອນອັນຄົບບໍຣິບູນຂອງພຣະອົງແລ້ວ ພວກເຮົາຕ້ອງຍ່າງໄປກັບພຣະອົງດ້ວຍຄວາມເຊື່ອຟັງແລະໄວ້ໃຈໃນພຣະອົງ ໃນເມື່ອພຣະອົງໄດ້ເປີດເຜີຍພຣະປະສົງຂອງພຣະອົງຕໍ່ພວກເຮົາ.

ເຮັດແນວໃດພວກເຮົາຈຶ່ງຈະເອົາເຣື່ອງຂອງອັບຣາມມາປະກອບໃຊ້ໃນຊີວິດຂອງພວກເຮົາໃນທຸກມື້ນີ້?

- ໃຫ້ຮູ້ວ່າທຸກໆຄົນຈະໄດ້ພົບກັບການປ່ຽນແປງໃນຊີວິດ, ແລະການທີ່ຕິດຕາມພຣະປະສົງຂອງພຣະເຈົ້ານັ້ນຕ້ອງປະກອບດ້ວຍການປ່ຽນແປງ. ມີການປ່ຽນແປງແນວໃດໃນຊີວິດເກີດຂຶ້ນໃນເມື່ອພຣະເຈົ້າໄດ້ເອີ້ນທ່ານໃຫ້ຕິດຕາມພຣະປະສົງຂອງພຣະອົງ?
- ໃຫ້ຮູ້ວ່າເວລາພຣະເຈົ້າເອີ້ນເຮົາໃຫ້ຕິດຕາມພຣະປະສົງຂອງພຣະອົງໄປນັ້ນ ຫລາຍໆເທື່ອພວກເຮົາອາດບໍ່ເຫັນ ຫລືເຂົ້າໃຈ ຈົນເຖິງເວລາເຮົາໄດ້ກ້າວອອກໄປດ້ວຍຄວາມເຊື່ອແລະການເຊື່ອຟັງ. ມີບໍ່ເວລາໃດພຣະເຈົ້າເອີ້ນທ່ານ ແລະທ່ານບໍ່ຍິນດີທີ່ຈະຕອບພຣະອົງ ເພາະທ່ານບໍ່ເຫັນຈຸດໝາຍປາຍທາງທີ່ຈະໄປ?
- ໃຫ້ຈື່ເອົາໄວ້ໃນເມື່ອເຮົາປະສົບກັບບັນຫາເວລາຕິດຕາມພຣະປະສົງຂອງພຣະເຈົ້າ, ພວກເຮົາຕ້ອງຮຽນຮູ້ທີ່ຈະໄວ້ວາງใจໃນພຣະສັນຍາຂອງພຣະອົງ ວ່າພຣະອົງຈະຊ່ວຍໃຫ້ພົ້ນໄດ້. ມີຄຳສັນຍາອັນໃດບໍ່ທີ່ພຣະເຈົ້າໄດ້ສັນຍາວ່າຈະຊ່ວຍ ແລະທ່ານຕ້ອງສືບຕໍ່ໄວ້ວາງใจໃນພຣະອົງ?

ອຸປຖັນໂດຍ ລາວຊາວເທີນບັບຕິສສັນພັນ www.lsbf.org.,by BV.